# ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ

# ( Lao PDR Trade Portal / LTP )



**ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ**

**ທຸກຂໍ້ມູນຂ່າວສານທີ່ທ່ານຕ້ອງການ**

**ຢູ່ໃກ້ພຽງປາຍນິ້ວມືຂອງທ່ານ !**

ນຳສະເໜີໂດຍ: ກົມການນຳເຂົ້າ ແລະ ສົ່ງອອກ,
ກະຊວງອຸດສາຫະກຳ ແລະ ການຄ້າ

Lao PDR Trade Portal

www.laotradeportal.gov.la
www.laotradeportal.org
www.laotradeportal.com

# ຫົວຂໍ້ນຳສະເໜີ

1. ຄວາມເປັນມາ
2. ຂໍ້ມູນ ແລະ ສະຖິຕິການຊົມໃຊ້
3. ສະຫຼຸບ
4. ແຜນການໃນຕໍ່ໜ້າ

# 1. ຄວາມເປັນມາ

- ສູນຂໍ້ມູນຂ່າວສານດ້ານການຄ້າ ໄດ້ສ້າງຂຶ້ນພາຍໃຕ້ໂຄງການ ການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍການສະໜັບສະໜູນທາງດ້ານການເງິນຈາກອົງການສາກົນ ພາຍໃຕ້ໂຄງການ TDF ເຊິ່ງເປັນກົມການນຳເຂົ້າ ແລະ ສົ່ງອອກ ເປັນຜູ້ຮັບຜິດຊອບ;
- ໂຄງການດັ່ງກ່າວ ໄດ້ຈັດຕັ້ງ ແລະ ກະກຽມມາແຕ່ປີ 2009, ແຕ່ສຳລັບ ສູນຂໍ້ມູນຂ່າວສານທາງດ້ານການຄ້າ ແມ່ນເລີ່ມປະຕິບັດໃນ ທ້າຍປີ 2011;
- ເປີດຕົວນຳໃຊ້ຢ່າງເປັນທາງການ ວັນທີ 22 ມິຖຸນາ 2012;
- ພັດທະນາ ແລະ ອັບເກຣດເປັນເວີຊັນ 2 (LTP Toolkit V2) ແລະ ເປີດນຳໃຊ້ ໃນວັນທີ 12 ເມສາ 2018.

# ເປັນຫຍັງຈຶ່ງຕ້ອງມີ ສູນຂໍ້ມູນຂ່າວສານທາງດ້ານການຄ້າ ?



- ເພື່ອສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ແກ່ພາກລັດ ແລະ ເອກະຊົນ, ນັກຮຽນນັກສຶກສາ, ນັກຄົ້ນຄວ້າທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບການຄ້າຂອງ ສປປ ລາວ ຢ່າງສະດວກງ່າຍດາຍ ຜ່ານລະບົບອອນລາຍ (ເວັບໄຊທ໌ LTP);
- ສ້າງແຫຼ່ງຂໍ້ມູນທີ່ເຂົ້າຫາໄດ້ໃນຈຸດດຽວ ກ່ຽວກັບລະບຽບການນຳເຂົ້າ, ສົ່ງອອກ ແລະ ນຳສິນຄ້າຜ່ານແດນ
- ເພື່ອປັບປຸງຄວາມແນ່ນອນ (Predictability) ແລະ ຄວາມໂປ່ງໃສ (Transparency) ທາງດ້ານລະບຽບການ ທີ່ຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ ຢູ່ ສປປ ລາວ;
- ເພີ່ມຄວາມສາມາດແຂ່ງຂັນ ພ້ອມທັງສ້າງແຮງຈູງໃຈໃຫ້ພາກທຸລະກິດ ໃຫ້ເຮັດການຄ້ານັບມື້ນັບຫຼາຍຂຶ້ນ;
- ປະຕິບັດພັນທະກັບສາກົນ ໂດຍສະເພາະ WTO ແລະ ASEAN ເຊັ່ນ:
  - ສັນຍາຂອງອົງການການຄ້າໂລກ: ສັນຍາວ່າດ້ວຍອັດຕາພາສີ ແລະ ການຄ້າ ໃນມາດຕາ X ຂອງ GATT.
  - ປະຕິບັດພັນທະກັບອາຊຽນ: ໃນມາດຕາ 13 ຂອງສັນຍາ ATIGA.

# ທີ່ຕັ້ງຂອງ ສູນຂໍ້ມູນຂ່າວສານທາງດ້ານການຄ້າ

LTP ມີທີ່ຢູ່ເວັບໄຊ໌ :

- www.laotradeportal.gov.la
- www.laotradeportal.com
- www.laotradeportal.org

ຕັ້ງຢູ່ **ຫ້ອງການປະຈຳກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ)** ໂດຍມີທີມງານ ຄຸ້ມຄອງບໍລິຫານ LTP, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ ຄຸ້ມຄອງບໍລິຫານ ແລະ ມີໜ້າທີ່ ນຳເອົາບັນດາຂໍ້ມູນຂ່າວສານທາງດ້ານການຄ້າທີ່ພົ້ນເດັ່ນ ທັງພາຍ ໃນ ແລະ ຕ່າງປະເທດ ແລະ ບັນດາຂໍ້ມູນ ທີ່ໄດ້ຮັບຈາກ ສະມາຊິກ ກຂອຄ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງກັບການຄ້າ ລົງໃນເວັບໄຊ໌ LTP ຢ່າງເປັນປະຈຳ.

# ເນື້ອໃນຂອງ ສູນຂໍ້ມູນຂ່າວສານທາງດ້ານການຄ້າ

- ພາສາລາວ ແລະ ອັງກິດ;
- ນິຕິກຳ ທີ່ເປັນກົດໝາຍ, ລະບຽບການ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການຄ້າ;
- ສາລະບານອັດຕາພາສີ AHTN 2016 (ASEAN Harmonized Tariff Nomenclature);
- ມາດຕະການທາງດ້ານການຄ້າ ທີ່ບໍ່ແມ່ນພາສີ (SPS, TBT ແລະ ອື່ນໆ);
- ຂັ້ນຕອນການອະນຸຍາດ ແລະ ແບບຟອມອະນຸຍາດ ທີ່ກ່ຽວຂ້ອງ;
- ຂ່າວ, ປະກາດ, ເຫດການ ແລະ ເອກະສານສິ່ງພິມ;
- ຄູ່ມືການນຳເຂົ້າ ແລະ ສົ່ງອອກ;
- ຈຸດສອບຖາມ ສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລະ ຈຸດສອບຖາມ ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ (TBT);
- ທຸກໆ ຂໍ້ມູນ ມີການເຊື່ອມໂຍງຫາກັນ.



# ສິ່ງອຳນວຍຄວາມສະດວກ






- ຕອບສະໜອງ ການຄົ້ນຫາດ້ວຍຫົວຂໍ້, ຄຳສັບ;
- ການຄົ້ນຫາ ສິນຄ້າ, ອັດຕາພາສີ, ມາດຕະການ, ແບບຟອມ, ຂັ້ນຕອນ (ຂໍ້ມູນຕ່າງໆມີການເຊື່ອມໂຍງ/ລິ້ງ ຫາກັນ);
- ແຜນວາດຂັ້ນຕອນ ການອະນຸຍາດ;
- ເບິ່ງ ແລະ ດາວໂຫຼດແບບຟອມ;
- ສິ່ງຄຳຖາມ ແລະ ຄຳແນະນຳ;
- ຈຸດສອບຖາມ SPS/TBT ເພື່ອຕອບຄຳຖາມຜູ້ຊົມໃຊ້;
- ຄຳຖາມທີ່ມັກຖາມເລື້ອຍໆ FAQ's;
- ການລົງທະບຽນເປັນສະມາຊິກ ເຊິ່ງຈະໄດ້ຮັບຜົນປະໂຫຍດເຊັ່ນ:
  - ການແຈ້ງເຕືອນ ເມື່ອມີການອັບເດດຂໍ້ມູນ;
  - ສາມາດຕິດຕາມການປ່ຽນແປງ ຂອງສິນຄ້າໃດໜຶ່ງທີ່ທ່ານເລືອກ.

# 2. ຂໍ້ມູນ ແລະ ສະຖິຕິການຊົມໃຊ້

## ທ່ານ ສາມາດຄົ້ນຫາຂໍ້ມູນຫຍັງໄດ້ແດ່ ?

❖ **ກະດານຂ່າວ**

1. ຂ່າວ
2. ປະກາດແຈ້ງການ
3. ບົດຄວາມ

❖ **ຖານຂໍ້ມູນ**

1. ຄົ້ນຫາອັດຕາພາສີ
2. ຄົ້ນຫານິຕິກຳ
3. ຄົ້ນຫາແບບຟອມ
4. ຄົ້ນຫາຂັ້ນຕອນ
5. ຄົ້ນຫາມາດຕະການ
6. ຄົ້ນຫາມາດຕະຖານ
7. ຄົ້ນຫາສິນຄ້າ

❖ **ເອກະສານການຄ້າ**

1. ເອກະສານສິ່ງພິມ
2. ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ
3. ສູນຂໍ້ມູນຂ່າວສານທາງດ້ານການຄ້າແຫ່ງຊາດ (NTR)

❖ **ເອກະສານການຄ້າ**

1. ການຄ້າກັບສະມາຊິກອາຊຽນ
2. ການຄ້າກັບສະຫະພົນເອີຣົບ
3. ການຄ້າກັບປະເທດອື່ນໆ
4. ການຄ້າຊາຍແດນ

❖ **ສິດທິພິເສດດ້ານການການຄ້າ**

1. ສິດທິພິເສດດ້ານການຄ້າ
2. ສິດທິພິເສດແບບໃຫ້ຝ່າຍດຽວ
3. ເຂດການຄ້າເສລີ
4. ແບບຟອມສຳລັບຂໍ ການຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO)
5. ແບບຟອມຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ
6. ຄຳຖາມທີ່ຖືກຖາມປະຈຳ (FAQ)

# ທ່ານ ສາມາດຄົ້ນຫາຂໍ້ມູນ ຫຍັງໄດ້ແດ່ ? (ຕໍ່)



# ຂໍ້ມູນທີ່ມີໃນປະຈຸບັນ

| ລາຍການ | ຈຳນວນທັງໝົດ |
|---|---|
| ອັດຕາພາສີ ລະບົບເອກະພາບລຸ້ນປີ 2012 ສະບັບປັບປຸງປີ 2016 ບັນຈຸ 10 ຕົວເລກ | 21 ພາກ ແລະ 97 ໝວດສິນຄ້າ ຊຶ່ງປະກອບມີ ລາຍການສິນຄ້າ ທັງໝົດ 9.558 ລາຍການ |
| ນິຕິກຳ | 382 |
| ຂ່າວ | 268 |
| ປະກາດ | 168 |
| ແບບຟອມ | 50 |
| ຂັ້ນຕອນ | 43 |
| ມາດຕະການ ແລະ ຂໍ້ກຳນົດ | 273 |
| ມາດຕະຖານແຫ່ງຊາດ | 432 |
| ເອກະສານສິ່ງພິມ | 68 |
| ບົດຄວາມ | 24 |
| ເຫດການທີ່ຈະມາເຖິງ | 59 |
| ຮ່າງກົດໝາຍ | 08 |
| ຂໍ້ມູນເຂົ້າສູ່ຕະຫຼາດ | 52 |

# ສະຖິຕິການຊົມໃຊ້ LTP




ປີ 2012: ນັບແຕ່ວັນທີ 22/06/2012 ເຖິງ 30/06/2018.

# 3. ສະຫຼຸບ








- ສປປ ລາວ ເປັນປະເທດທຳອິດໃນຂົງເຂດທີ່ ສ້າງສູນຂໍ້ມູນຂ່າວສານທາງດ້ານຄ້າ;
- ເປັນຈຸດດຽວໃນການເຂົ້າເຖິງຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບການຄ້າ, ການນຳເຂົ້າ ແລະ ສົ່ງອອກ, ການນຳສິນຄ້າຜ່ານແດນສິນຄ້າ;
- ຊ່ວຍໃຫ້ທັງພາກລັດ, ຜູ້ປະກອບການ, ນັກຮຽນນັກສຶກສາ ສາມາດເຂົ້າເຖິງຂໍ້ມູນໄດ້ຢ່າງສະດວກງ່າຍດາຍ ແນ່ນອນ ແລະ ໂປ່ງໃສ.
- ຊ່ວຍຫຼຸດຜ່ອນຕົ້ນທຶນ ແລະ ປະຢັດເວລາໃຫ້ແກ່ການດຳເນີນທຸລະກິດ;
- ເປັນຕົວແບບໃຫ້ຫຼາຍປະເທດ ໂດຍສະເພາະໃນຂົງເຂດອາຊຽນ, ອາຊີປາຊີຟິກ ໃນການສ້າງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ເຂົາເຈົ້າ.

# 4. ແຜນການໃນຕໍ່ໜ້າ

1. **ການພັດທະນາລະບົບ.**

✓ ມີແຜນພັດທະນາລະບົບເປັນ APP Android, IOS, ແລະ EXE.

2. **ການອັບເດດເນື້ອໃນ.**

✓ ອັບເດດເນື້ອໃນບາງເມນູຍ່ອຍ: ລະຫັດອັດຕາພາສີສະບັບ 2017, ສິດທິພິເສດທາງດ້ານການຄ້າ.

3. **ການເຊື່ອມໂຍງຂໍ້ມູນ**

✓ ເຊື່ອມໂຍງກັບການອະນຸຍາດ ໂດຍຜ່ານລະບົບປະຕູດຽວ ຫຼື National Single Windows.

✓ ປັບປຸງຂໍ້ມູນ LTP ໃຫ້ກາຍເປັນ ສູນຂໍ້ມູນຂ່າວສານການຄ້າແຫ່ງຊາດ ຫຼື National Trade Repository /NTR ທີ່ເຊື່ອມໂຍງກັບ ASEAN Trade Repository/ATR ເພື່ອປະຕິບັດພັນທະໃນກອບອາຊຽນຢ່າງເຕັມສ່ວນ.

# ສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ

## ທຸກຂໍ້ມູນຂ່າວສານທີ່ທ່ານຕ້ອງການ

## ຢູ່ໃກ້ພຽງປາຍນິ້ວມືຂອງທ່ານ !



# ຕິດຕໍ່ພົວພັນໄດ້ທີ່


ພະແນກອຳນວຍຄວາມສະດວກທາງດ້ານການຄ້າ,

ກົມການນຳເຂົ້າ ແລະ ສົ່ງອອກ

ກະຊວງອຸດສາຫະກຳ ແລະ ການຄ້າ

**ໂທ/ແຟັກ: 021 454 224**

**Email: enquiries@laotradeportal.gov.la**


Lao PDR Trade Portal

http://www.laotradeportal.gov.la
http://www.laotradeportal.com
http://www.laotradeportal.org